**ມິຊຊາສົມໂພດນັກບຸນທັງຫລາຍ**

**ວັນທີ 1 ພະຈິກ 2019**




**ບົດອ່ານຈາກໜັງສືພຣະສໍລະຍານ 7, 2-4, 9-14**

ຂ້າພະເຈົ້າຍວງໄດ້ເຫັນເທວະດາອີກອົງໜຶ່ງຂຶ້ນມາຈາກທິດຕາເວັນອອກຖືຕາຂອງພຣະເຈົ້າຜູ້ຊົງຊີວິດ. ເທວະດານີ້ຮ້ອງສຽງດັງບອກເທວະດາສີ່ອົງຊຶ່ງໄດ້ຮັບມອບໝາຍໃຫ້ທຳລາຍແຜ່ນດິນແລະທະເລວ່າ: ຢ່າທຳລາຍແຜ່ນດິນ, ທະເລແລະຕົ້ນໄມ້ກ່ອນທີ່ພວກເຮົາຈະປະທັບຕາໃສ່ໜ້າຜາກຂອງພວກຂ້າໃຊ້ຂອງພຣະເຈົ້າຂອງເຮົາ. ແລ້ວຂ້າພະເຈົ້າໄດ້ຍິນບອກວ່າ: ຈຳນວນຂອງຜູ້ໄດ້ຖືກປະທັບຕານັ້ນມີໜຶ່ງແສນສີ່ໝື່ນສີ່ພັນຄົນຈາກທຸກຕະກຸນແຫ່ງບຸດຫລານອິສຣາແອນ.

ແລ້ວຕໍ່ມາຂ້າພະເຈົ້າໄດ້ແລເຫັນຝູງຄົນເປັນຈຳນວນມາກມາຍເຫລືອທີ່ຈະນັບໄດ້, ມາຈາກທຸກປະເທດ, ທຸກຕະກຸນ, ທຸກຊາດ, ທຸກພາສາຢືນຢູ່ຕໍ່ໜ້າພຣະທີ່ນັ່ງ, ຕໍ່ພຣະພັກຂອງພຣະຊຸມພານ້ອຍ. ຄົນເຫລົ່ານັ້ນທົງເຄື່ອງຂາວແລະຖືໃບລານໃນມືພ້ອມກັນໂຮຮ້ອງສຽງດັງວ່າ: ຄວາມຮອດຢູ່ໃນພຣະເຈົ້າຂອງພວກເຮົາຜູ້ປະທັບຢູ່ເທິງບັນລັງ ແລະຢູ່ໃນພຣະຊຸມພານ້ອຍດ້ວຍ. ແລ້ວພວກນິກອນເທວະດາທີ່ຢືນຢູ່ອ້ອມພຣະທີ່ນັ່ງ, ຢູ່ອ້ອມພວກອາວຸໂສແລະຜູ້ມີຊີວິດທັງສີ່ຂາບລົງຕໍ່ໜ້າພຣະລາຊະບັນລັງນະມັດສະການພຣະເປັນເຈົ້າວ່າ: ອາແມນ! ຂໍພຣະເຈົ້າຂອງເຮົາຈົ່ງໄດ້ຮັບພະພອນ ສິມຸງຄຸນ, ຄວາມສະຫລາດສຸຂຸມ, ການສົມມະນາຄຸນ, ກຽດຕິຍົດ, ລິດທານຸພາບ, ພາລະກຳລັງຕະຫລອດນິລັນດອນ. ອາແມນ! ແລ້ວນັ້ນຜູ້ອາວຸໂສຜູ້ໜຶ່ງກ່າວກັບຂ້າພະເຈົ້າວ່າ: ພວກທີ່ທົງເຄື່ອງຂາວເຫລົ່ານີ້ແມ່ນພວກໃດ? ແລະມາແຕ່ໃສ? ຂ້າພະເຈົ້າທູນຕອບວ່າ: ອາດຍາເອີຍ! ອາດຍາເອງຮູ້ຈັກແລ້ວ. ທ່ານອາວຸໂສຈຶ່ງອະທິບາຍໃຫ້ຂ້າພະເຈົ້າຟັງວ່າ: ຄົນເຫລົ່ານີ້ແມ່ນພວກທີ່ໄດ້ຜ່ານຄວາມທຸກຍາກອັນໃຫຍ່ຫລວງມາແລ້ວ. ພວກເຂົາໄດ້ຊັກຟອກເຄື່ອງທົງຂອງຕົນໃຫ້ສະອາດບໍລິສຸດ ດ້ວຍພຣະໂລຫິດຂອງພຣະຊຸມພານ້ອຍ.

ນີ້ແມ່ນວາຈາຂອງພຣະເປັນເຈົ້າ

**ບົດແບ່ງປັນ: ສຍ 7, 2-4, 9-14**

ວັນທີໜຶ່ງເດືອນພະຈິກຂອງທຸກໆປີ ພຣະກຣິສຕະຈັກໄດ້ເລືອກເປັນວັນສົມໂພດນັກບຸນທັງຫລາຍຂອງພຣະເຈົ້າ. ເປັນຫຍັງຈຶ່ງຕ້ອງສະຫລອງນັກບຸນທັງຫລາຍພ້ອມກັນໃນວັນນີ້? ວັນສົມໂພດນີ້ມີຄວາມສຳຄັນຢ່າງໃດ? ວັນສົມໂພດນີ້ມີຄວາມກ່ຽວພັນຫຍັງກັບພວກເຮົາ? ວັນສົມໂພດນີ້ມີຄວາມພົວພັນຢ່າງໃດກັບວັນລະລຶກເຖິງບັນດາຜູ້ລ່ວງລັບ?

ແທ້ຈິງແລ້ວໃນພຣະກຣິສຕະຈັກຂອງພວກເຮົາມີນັກບຸນເປັນຈຳນວນຫລວງຫລາຍແລະກໍຍັງສືບຕໍ່ມີມາຈົນເຖິງທຸກວັນນີ້, ເພາະທຸກຄົນລ້ວນແຕ່ຖືກຮຽກເອີ້ນໃຫ້ເປັນນັກບຸນ. ໃນຈຳນວນນັກບຸນທັງຫລາຍນີ້ ກໍມີນັກບຸນທີ່ທຸກຄົນຮູ້ຈັກແລະນັກບຸນທີ່ບໍ່ມີໃຜຮູ້ຈັກ. ເຖິງວ່າແຕ່ລະວັນພຣະກຣິສຕະຈັກໄດ້ສະຫລອງຫລືລະນຶກເຖິງນັກບຸນເຫລົ່ານີ້ໃນມະຫາບູຊາມິຊຊາ ແຕ່ກໍຍັງບໍ່ໄດ້ໝົດທຸກນັກບຸນ. ອາໄສແບບຢ່າງຊີວິດທີ່ຫລາກຫລາຍແລະແຕກຕ່າງກັນຂອງບັນດານັກບຸນນີ້ຈະເປັນຄວາມຫວັງແລະກຳລັງໃຈໃຫ້ພວກເຮົາວ່າ ທຸກຄົນສາມາດເປັນນັກບຸນໄດ້ໃນທຸກກາລະນີແລະທຸກແຫ່ງຫົນ.

ແຕ່ສິ່ງທີ່ກ່າວມານີ້ບໍ່ແມ່ນເຫດຜົນຫລັກທີ່ພຣະກຣິສຕະຈັກເລືອກວັນນີ້ໃຫ້ເປັນວັນສົມໂພດນັກບຸນທັງຫລາຍ. ການທີ່ພຣະກຣິສຕະຈັກສົມໂພດນັກບຸນທັງຫລາຍວັນນີ້ແມ່ນເພື່ອສະແດງອອກເຖິງຄວາມສຳພັນແລະຄວາມເປັນໜຶ່ງດຽວຂອງພຣະກຣິສຕະຈັກທັງມວນ. ຄຳວ່າພຣະກຣິສຕະຈັກທັງມວນນີ້ບໍ່ພຽງແຕ່ພຣະກຣິສຕະຈັກທົ່ວທຸກມູມໂລກໃນແຜ່ນດິນນີ້ເທົ່ານັ້ນ, ແຕ່ຍັງໝາຍເຖິງພຣະກຣິສຕະຈັກໃນສະຫວັນແລະພຣະກຣິສຕະຈັກທີ່ກຳລັງຖືກຊຳລະລ້າງໃຫ້ບໍລິສຸດໃນໄຟຊຳລະອີກດ້ວຍ. ເພາະສະນັ້ນ, ມື້ຕໍ່ມາຂອງວັນສົມໂພດນັກບຸນທັງຫລາຍພຣະກຣິສຕະຈັກຈຶ່ງລະລຶກເປັນພິເສດເຖິງບັນດາຜູ້ເຊື່ອໃນພຣະເຈົ້າທີ່ລ່ວງລັບໄປ.

ເມື່ອພວກເຮົາເປັນໜຶ່ງດຽວກັນໃນອາໄວຍະວະດຽວຄືພຣະກາຍທິບຂອງພຣະກຣິສໂຕເຈົ້າອັນແມ່ນພຣະກຣິສຕະຈັກແລ້ວ, ຖ້າອາໄວຍະວະໃດໜຶ່ງຂອງຮ່າງກາຍນີ້ຫາກເຈັບປວດ ຮ່າງກາຍທັງຄົບກໍຈະແບ່ງປັນຄວາມເຈັບປວດນີ້. ກົງກັນຂ້າມ, ຖ້າອາໄວຍະວະໃດຫາກແຂງແຮງ ຮ່າງກາຍທັງຄົບກໍຈະມີສຸຂະພາບສົມບູນເຊັ່ນດຽວກັນ. ດ້ວຍເຫດນີ້, ວັນສົມໂພດນັກບຸນທັງຫລາຍຈຶ່ງເປັນວັນສຳຄັນແລະຊື່ນຍິນດີສຳລັບບັນດານັກບຸນໃນສະຫວັນ, ກໍຄືພວກເຮົາໃນແຜ່ນດິນແລະບັນດາວິນຍານໃນໄຟຊຳລະ. ເພາະພວກເຮົາລ້ວນແຕ່ເປັນອະໄວຍະວະດຽວໃນພຣະກຣິສຕະຈັກອັນດຽວກັນ. ຄວາມຍິນດີນີ້ໄດ້ສະແດງອອກໃນບົດອ່ານທີໜຶ່ງຊຶ່ງພວກເຮົາໄດ້ຟັງຈາກໜັງສືພຣະສໍລະຍານ. ນັກບຸນຢວງໄດ້ເນລະມິດໃຫ້ພວກເຮົາເຫັນຮູບພາບຂອງພຣະກຣິສຕະຈັກໃນສະຫວັນຊຶ່ງມີຝູງຄົນເປັນຈຳນວນຫລວງຫລາຍທີ່ມາຈາກທຸກປະເທດ, ທຸກຕະກຸນ, ທຸກຊາດ, ທຸກພາສາເພື່ອມາປາກົດຕົວຕໍ່ພຣະພັກຂອງພຣະຊຸມພານ້ອຍ. ເປັນຫຍັງຄົນເຫລົ່ານີ້ຈຶ່ງມ່ວນຊື່ນຍິນດີ? ຍ້ອນພວກເຂົາໄດ້ພົບກັບຄວາມສຸກທີ່ແທ້ຈິງຊຶ່ງພວກເຂົາໄດ້ຊອກສະແຫວງຫາຕະຫລອດຊີວິດຂອງພວກເຂົາອັນແມ່ນພຣະເຢຊູກຣິສໂຕ, ພຣະຊຸມພານ້ອຍຜູ້ໄດ້ໄຖ່ກູ້ພວກເຂົາ.

ເພື່ອຈະບັນລຸເຖິງຄວາມສຸກທີ່ແທ້ຈິງນີ້, ນັກບຸນມັດເທວໄດ້ບອກສອນພວກເຮົາໃນບົດເທດເທິງພູເຂົາຊຶ່ງພວກເຮົາຮຽກວ່າ: ບຸນມະຫາລາບແປດປະການ. ບຸນມະຫາລາບແປດປະການນີ້ປຽບເໝືອນເສັ້ນທາງທີ່ຈະນຳພວກເຮົາໄປສູ່ຄວາມສຸກຍອດປາດຖະໜາອັນແມ່ນອານາຈັກສະຫວັນນັ້ນເອງ. ຖ້າພວກເຮົາຖືເອົາຄວາມສຸກແປດປະການນີ້ເປັນບັນທັດຖານໃນຊີວິດຂອງພວກເຮົາແລ້ວ. ແນ່ນອນ, ວັນໜຶ່ງພວກເຮົາຈະໄດ້ໄປປາກົດຕົວຕໍ່ໜ້າພຣະຊຸມພານ້ອຍພ້ອມກັບບັນດານັກບຸນໃນສະຫວັນນັ້ນແລ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ